# ໜັງສື ໂຢຮັນທີ ໑

ໃຈຄວາມສຳຄັນ ຄວາມສວ່າງຄວາມຮັກແລະຊີວິດ

ຈຳນວນບົດ ໕ ບົດ

## ວ່າດ້ວຍຜູ້ຂຽນ

ເຖິງແມ່ນວ່າທ່ານໂຢຮັນບໍ່ໄດ້ຂຽນບອກຊື່ຕົນເອງໄວ້ ພວກເຮົາກໍເຊື່ອແນ່ວ່າໜັງສືທັງສາມນີ້ແມ່ນທ່ານໂຢຮັນຂຽນ ເພາະພວກຄຣິສ-ຕະຈັກໃນຄາວກ່ອນກໍຖືວ່າ ໜັງສືທັງສາມນີ້ແມ່ນທ່ານໂຢຮັນຜູ້ເປັນອັຄສາວົກໄດ້ຂຽນ ຄືເພິ່ນໃສ່ຊື່ຕົນເອງວ່າຜູ້ເຖົ້າແກ່

## ວ່າດ້ວຍເຣື່ອງຂອງທ່ານໂຢຮັນ

໑. ໃນ ຄັ້ງ ກ່ອນ ທ່ານ ໂຢຮັນ ເປັນ ລູກສິດ ຂອງ ທ່ານ ໂຢຮັນ ບັບຕິສໂຕ (ໂຢຮັນ ໑:໓໕–໔໐)

໒. ເວລາທີ່ທ່ານໂຢຮັນຖືກເອີ້ນໃຫ້ເຂົ້າເປັນຜູ້ຮັບໃຊ້ ມີສາມເວລາຄື

– ເວລາ ເພິ່ນ ພົບ ກັບພຣະເຢຊູແລ້ວໄດ້ຕິດຕາມພຣະອົງໄປ (ໂຢຮັນ ໑:໓໕-໔໐)

– ເວລາທີ່ ພຣະເຢຊູຊົງເອີ້ນເອົາເພິ່ນກັບໝູ່ສາມຄົນໃຫ້ ເຂົ້າເປັນສາວົກ (ມັດທາຍ ໔:໒໑–໒໒)

– ເວລາທີ່ ພຣະເຢຊູຊົງແຕ່ງຕັ້ງ ເພິ່ນກັບໝູ່ ໑໒ ຄົນ ເປັນອັຄສາວົກ (ລູກາ ໖:໑໒–໑໔)

໓. ທ່ານໂຢຮັນເປັນອັຄສາວົກທີ່ໃກ້ຊິດສນິດສນົມກັບ ພຣະເຢຊູກວ່າຄົນອື່ນ ໆ ຈົນບາງຄັ້ງທ່ານໂຢຮັນເອີ້ນຕົນເອງວ່າ "ສາວົກທີ່ພຣະເຢຊູຊົງຮັກ" (ໂຢຮັນ ໑໓:໒໓; ໒໐:໒; ໒໑:໗;໒໐) ຄຣູສອນບາງຄົນເຂົ້າໃຈວ່າ ທ່ານໂຢຮັນເປັນພີ່ນ້ອງກັນກັບພຣະເຢຊູຝ່າຍເນື້ອໜັງ ເພາະມາດາ ຂອງທ່ານໂຢຮັນ ແລະ ມາດາຂອງພຣະເຢຊູກໍເປັນເອື້ອຍນ້ອງກັນ

໔. ມີເຣື່ອງ ຂອງ ທ່ານ ໂຢຮັນຂຽນໄວ້ ແຕ່ສາມເທື່ອ ໃນ ໜັງສື ກິຈການ (໓:໑,໔; ໔:໑໓,໘:໑໔) ເຖິງຢ່າງນັ້ນກໍດີທ່ານໂຢຮັນຍັງໄດ້ຮັບໃຊ້ໃນຄຣິສຕະຈັກຕ່າງ ໆ ແລະ ໄດ້ມີຊີວິດຍືນຍາວກວ່າອັຄສາວົກທັງໝົດ ເພິ່ນໄດ້ຢູ່ເມືອງເອເຟດຣະຫວ່າງປີ ຄ.ສ. ໑໐໐–໑໑໐

## ວ່າດ້ວຍຜູ້ຮັບ

ບໍ່ມີບ່ອນໃດບອກໃຫ້ຮູ້ວ່າ ທ່ານໂຢຮັນຂຽນໜັງສືນີ້ສົ່ງໄປເຖິງໃຜ ແຕ່ພວກຄຣູສອນສ່ວນຫລາຍ ຄິດວ່າ ເພິ່ນໄດ້ຂຽນໜັງສືສຳລັບຄຣິສຕະຈັກໃນເມືອງເອເຟດແລະຂົງເຂດດຽວກັນ

## ວ່າດ້ວຍເວລາທີ່ຂຽນ

ພວກເຮົາເຂົ້າໃຈວ່າ ໃນບັນດາພຣະຄັມພີທັງໝົດ ແມ່ນໜັງສືໂຢຮັນທີ ໑,໒,໓ ທີ່ຂຽນຄັ້ງຫລັງສຸດຄືໜັງສືຄຳປາກົດກໍຂຽນກ່ອນໜັງສືເລົ່ານີ້ ພວກເຮົາບໍ່ຮູ້ຄັກວ່າ ໜັງສືທັງສາມນີ້ໄດ້ຂຽນໃນປີໃດ ແຕ່ພວກຄຣູສອນສ່ວນຫລາຍເຂົ້າໃຈກັນວ່າ ໄດ້ຂຽນປີ ຄ.ສ. ໑໐໐

## ວ່າດ້ວຍຄວາມມຸ່ງໝາຍ

ມູນເຫດທີ່ທ່ານໂຢຮັນໃນການຂຽນໜັງສືນີ້ ໄດ້ມີຢູ່ໃນບົດ ໑:໔, ໒:໑,໗–໘,໑໒–໑໔,໒໑,໒໖ ແລະ ໕:໑໓ ດັ່ງສເນີຕໍ່ໄປນີ້

໑. ເພື່ອໃຫ້ມີໃຈບໍຣິສຸດເວັ້ນຈາກບາບ ແລະເພື່ອໃຫ້ປະຕິບັດຕາມຄຳສັ່ງຂອງພຣະເຈົ້າ ໒:໑,໔

໒. ໃຫ້ຮັກແພງຊຶ່ງກັນແລະກັນ ເພື່ອຮ່ວມຈິດຮ່ວມໃຈກັນກັບພຣະເຈົ້າ ແລະເພື່ອຄວາມຍິນດີຈະໄດ້ສຳເຣັດ ໑:໔; ໒:໗–໑໑; ໓:໑໑–໑໕, ໑໘–໒໔

໓. ໃຫ້ຣະມັດຣະວັງພວກຄຣູສອນປອມ ໒:໒໖; ໔:໑–໓

໔. ໃຫ້ເຂົ້າໃຈຢ່າງຄັກແນ່ວ່າ ຜູ້ທີ່ເຊື່ອໃນພຣະບຸດຂອງພຣະເຈົ້ານັ້ນຈະຕ້ອງມີຊີວິດ ຕລອດໄປເປັນນິດ ໕:໑໓,໒໐

## ວ່າດ້ວຍເນື້ອຄວາມ:

ໜັງສືຂ່າວປະເສີດຂອງທ່ານໂຢຮັນ ກັບໜັງສືໂຢຮັນສະບັບທີ ໑ ໄດ້ອະທິບາຍເຣື່ອງກ່ຽວກັບອົງພຣະຄຣິດໃນທຳນອງດຽວກັນ ຄືເວົ້າວ່າ ພຣະເຈົ້າຊົງປາກົດເປັນພຣະຄຣິດ ຊົງເປັນແຈ້ງ ຊົງເປັນຄວາມຮັກແລະເປັນຊີວິດ ຊຶ່ງເຮົາພໍຈະແບ່ງໄດ້ດັ່ງຕໍ່ໄປນີ້:

ບົດທີ ໑–໒ ພຣະເຈົ້າຊົງເປັນແຈ້ງ ແລະພວກຄຣິສຕຽນກໍຕ້ອງດຳເນີນໄປໃນທາງແຈ້ງນັ້ນ

ບົດທີ ໓–໔ ພຣະເຈົ້າຊົງເປັນຄວາມຮັກ ແລະພວກຄຣິສຕຽນ

ກໍຈະຕ້ອງມີອາການຢ່າງດຽວກັນນັ້ນ

ບົດທີ ໔ ພຣະເຈົ້າຈິງເປັນຊີວິດແລະພວກຄຣິສຕຽນກໍຕ້ອງມີຊີວິດເໝືອນກັນນັ້ນ

ແຕ່ໃນໜັງສືຂ່າວປະເສີດນັ້ນໄດ້ມີດັ່ງນີ້:

ບົດ ໑–໑໔ ພຣະເຈົ້າຈິງເປັນຊີວິດ ແລະຈິງປາກົດແກ່ມະນຸສ-ໂລກ

ບົດ ໑໓–໑໗ ພຣະເຈົ້າຈິງເປັນແຈ້ງ ແລະຈິງປາກົດແກ່ພວກສາວົກ

ບົດ ໑໘–໒໐ ພຣະເຈົ້າຈິງເປັນຄວາມຮັກແລະຈິງປາກົດແກ່ຄົນທັງປວງ

ໂດຍທົ່ວໆ ໄປແລ້ວ ທ່ານໂຢຮັນມັກສະແດງເຣື່ອງທີ່ກົງກັນຂ້າມ ເຊັ່ນຊີວິດກັບຄວາມຕາຍ ຄວາມຈິງກັບຄວາມເທັດ ຄວາມຮັກກັບຄວາມຊັງ ຄວາມແຈ້ງກັບມືດ ຄວາມຊອບທັມກັບຄວາມບາບ ພຣະບິດາກັບໂລກແລະລູກຂອງພຣະເຈົ້າກັບລູກຂອງພະຍາມານ.

ການແບ່ງເປັນພາກ:

ຄຳນຳ ບົດ ໑:໑–໔

ພາກທີ ໑ ຄວາມກ້າວໜ້າຂອງຄຣິສຕຽນໃນຄວາມສວ່າງຂອງພຣະເຈົ້າ ບົດ ໑:໕–໒:໒໙

໑. ເງື່ອນໄຂທີ່ນຳໄປສູ່ຄວາມສວ່າງຂອງພຣະເຈົ້າ ບົດ ໑:໕–໒:໑໑

ກ. ການປະພຶດດ້ວຍການຍອມຮັບສາຣະພາບບາບຢູ່ສເມີ ບົດ ໑:໕–໒:໒

ຂ. ການປະພຶດຕາມຄຳສັ່ງຂອງພຣະເຈົ້າ ບົດ ໒:໓–໖

ຄ. ຕ້ອງມີຄວາມຮັກແພງຊຶ່ງກັນແລະກັນ ບົດ ໒:໗–໑໑

໒. ເຫດທີ່ຂັດຂວາງຜູ້ປະພຶດຕາມສວ່າງຂອງພຣະເຈົ້າ ບົດ ໒:໑໒–໒໘

ກ. ສາມພວກໃນຄຣິສຕະຈັກ ບົດ ໒:໑໒–໑໔

ຂ. ໂລກເປັນສັດຕຣູຕໍ່ຄຣິສຕຽນ ບົດ ໒:໑໕–໒໓

ຄ. ຄວາມປອດໄພຈາກຜູ້ລ່ອນປ່ອມ ບົດ ໒:໒໔–໒໘

## ພາກທີ ໒ ລັກສນະອາການຂອງຄົນຄຣິສຕຽນໃນຄວາມຮັກຂອງພຣະເຈົ້າ ບົດ ໓:໑–໕:໒໑

໑. ສາເຫດທີ່ເຮັດໃຫ້ຄວາມຊົ່ວບໍ່ມີອຳນາດ ບົດ ໓:໑–໔:໖

ກ. ໃຫ້ຕໍ່ສູ້ຄວາມຊົ່ວດ້ວຍຄວາມຊອບທັມ ບົດ ໓:໑–໘

ຂ. ໃຫ້ຕໍ່ສູ້ຄວາມຊັງດ້ວຍຄວາມຮັກ ບົດ ໓:໑໐–໒໔

ຄ. ໃຫ້ຕໍ່ສູ້ຄວາມເທັດດ້ວຍຄວາມຈິງ ບົດ ໔:໑–໖

໒. ວ່າດ້ວຍຄວາມຮັກເຮັດໃຫ້ຄວາມຊົ່ວບໍ່ມີອຳນາດ ບົດ ໔:໗–໒໑

ກ. ຕົ້ນເດີມຂອງຄວາມຮັກ ບົດ ໔:໗–໑໐

ຂ. ສາເຫດແຫ່ງຄວາມຮັກ ບົດ ໔:໑໑–໑໖

ຄ. ການດຳເນີນຊີວິດດ້ວຍຄວາມຮັກ ບົດ ໔:໑໗–໒໑

## ພາກທີ ໓ ວ່າດ້ວຍການເຂົ້າສ່ວນກັບກັບຊີວິດຂອງພຣະ-ເຈົ້າ ບົດ ໕:໑—໒໐

໑. ເຮົາມີຊີວິດອັນຕລອດໄປເປັນນິດນັ້ນແລ້ວ ບົດ ໕:໑–໑໒

໒. ຄວາມຮູ້ສຶກຕົວວ່າມີຊີວິດຕລອດໄປເປັນນິດ ບົດ ໕:໑໓–໒໐

## ຂໍ້ສຸດທ້າຍ ຂໍ້ ໒໑

ວ່າດ້ວຍເນື້ອຄວາມໃນໜັງສື:

ຫລັກແຫ່ງຄວາມພົ້ນ ໗ ປະການຄື:

໑. ການທ່ຽວໄປໃນທີ່ມືດຄືຄວາມຈິບຫາຍ ບົດ ໑:໖

໒. ການທ່ຽວໄປໃນທີ່ແຈ້ງ ຄືທາງແຫ່ງຄວາມພົ້ນ ບົດ ໑:໗

໓. ການເວົ້າວ່າບາບບໍ່ມີຄືທາງຫາຍະນະ ບົດ ໑:໘

໔. ການຍອມສາຣະພາບບາບຄືທາງແຫ່ງພຣະຄຸນ ບົດ ໑:໙

໕. ຖ້າມີຜູ້ກະທຳຜິດກໍມີຜູ້ເລົ່າໂລມຜູ້ນຶ່ງ ບົດ ໒:໑

໖. ການປະຕິບັດຕາມຄຳສັ່ງຂອງພຣະເຈົ້າ ຄື ທາງທີ່ພົ້ນດັ່ງແນ່ນອນ ບົດ ໒:໓

໗. ການຮັກແພງໂລກ ຄືທາງແຫ່ງຄວາມ
ຈິບຫາຍ ບົດ ໒:໑໕

## ວ່າດ້ວຍພຣະເຢຊູຄຣິດ:

໑. ພຣະອົງຊົງເປັນຜູ້ເລົ້າໂລມພວກເຮົາຕໍ່ພຣະພັກ
ພຣະບິດາ ບົດ ໒:໑

໒. ພຣະອົງຊົງຖືກປະທານຊີວິດເພື່ອໄຖ່ບາບຂອງ
ພວກເຮົາ ບົດ ໒:໒

໓. ພຣະອົງຊົງເປັນແບບຢ່າງຂອງພວກເຮົາ ບົດ ໒:໖

໔. ພຣະອົງຊົງເປັນຜູ້ປະທານພຣະວິນຍານ
ບໍຣິສຸດ ບົດ ໒:໒໐–໒໗

໕. ພຣະອົງຊົງເປັນພຣະຄຣິດ ບົດ ໒:໒໒

໖. ພຣະອົງຊົງເປັນເຄືອພາກອະທຽນ ບົດ ໒:໒໘

໗. ພຣະອົງຊົງເປັນພຣະມະຫາກະສັດ ບົດ ໒:໒໘

## ວ່າດ້ວຍສະພາບຂອງຄົນທີ່ເຊື່ອ

໑. ຈະເປັນເໝືອນດັ່ງພຣະອົງ ບົດ ໓:໒

໒. ຈະບໍ່ກະທຳບາບ ບົດ ໓:໓–໙

໓. ຈະພົ້ນຈາກຄວາມຕາຍ ບົດ ໓:໑໔

໔. ຈະຮັກແພງຊຶ່ງກັນແລະກັນ ບົດ ໓:໑໔–໑໕

໕. ຍອມສລະຊີວິດຂອງຕົນເພື່ອເຫັນແກ່ພີ່ນ້ອງ ບົດ ໓:໑໖

໖. ຈະມີຄວາມໝັ້ນໃຈຕໍ່ພຣະພັກຂອງພຣະເຈົ້າ

ບົດ ໓:໒໐–໒໑

໗. ຈະປະຕິບັດຕາມຄຳສັ່ງທັງຫລາຍຂອງພຣະເຈົ້າ ບົດ ໓:໒໒

## ວ່າດ້ວຍຄວາມຮັກ:

໑. ພຣະເຈົ້າຈິງເປັນຄວາມຮັກ ບົດ ໔:໘

໒. ພຣະເຢຊູຈິງປາກົດເປັນຄວາມຮັກຂອງພຣະເຈົ້າ ບົດ ໔:໙–໑໐

໓. ຄວາມຮັກຂອງຄົນທີ່ເຊື່ອ ຄືຂໍ້ພິສູດວ່າ ພຣະເຈົ້າຈິງຢູ່ນຳເຂົາ ບົດ ໔:໑໑–໒໑

## ວ່າດ້ວຍຄວາມໄຊຊະນະຂອງຄົນທີ່ເຊື່ອ:

໑. ຄົນທີ່ເຊື່ອຄືຜູ້ຊະນະໂລກ ບົດ ໕:໔

໒. ຄົນທີ່ເຊື່ອຄືຜູ້ມີຊີວິດຕລອດໄປເປັນນິດ ບົດ ໕:໑໓

໓. ຄົນທີ່ເຊື່ອໄດ້ຮັບສິ່ງທີ່ຂໍດ້ວຍຄຳອ້ອນວອນ

ບົດ ໕:໑໔–໑໕

໔. ຄົນທີ່ເຊື່ອຊ່ອຍຄົນອື່ນໃຫ້ມາຫາພຣະເຢຊູ ບົດ ໕:໑໖–໑໗

໕. ຄົນທີ່ເຊື່ອຊະນະຄົນຮ້າຍໄດ້ ບົດ ໕:໑໘–໒໑